# ກົດໝາຍຣັດໂຄໂລຣາໂດປີ 2006 ວ່າດ້ວຍອາກາດປອດໂປ່ງໃນອາຄານ

ບັງຄັບໃຊ້ແຕ່: ວັນທີ່ 2 ກໍຣກົດ 2006 ເປັນຕົ້ນໄປ

ປະກາດແຈ້ງເຖິງຈຸດປະສົງຂອງກົດໝາຍທີ່ຈະຕ້ອງຮັກສາແລະປັບປຸ່ງ ສຸຂະພາບ, ຄວາມສນຸສະບາຍແລະສິ່ງແວດລ້ອມ ຂອງຊາວຣັດໂຄໂລຣາໂດ ໃຫ້ຫລຸດຜ່ອນຈາກກິ່ນຄວັນຂອງຢາສູບ.

## ຕ້ອງໃຫ້ມີເຂດປອດກິ່ນຄວັນຂອງຢາສູບໃນອາຄານ

ຣວມທັງແຕ່ບໍ່ຈຳກັດ:

- ສະຖານທີ່ແລະອາຄານສາທາຣະນະເປັນຕົ້ນແມ່ນ: ລິຟ, ຫ້ອງນໍ້າ, ໂຮງຫນັງ/ໂຮງລະຄອນ, ຫໍພິພິທພັນ, ຫໍສມຸດ, ໂຮງຮຽນ, ສະຖານສຶກສາ, ອາຄານຄົນຊາລາ ແລະ ສະຖານພຍາບານຄົນສູງອາຍຸ
- ຫ້ອງໂຖງ, ເຂດຮັບຕ້ອນ, ທາງຍ່າງໃນອາຄານ ແລະ ເຂດທີ່ຜູ້ຄົນໃຊ້ໂດຍທົ່ວໄປ
- ຮ້ານອາຫານ, ຮ້ານກິນດື່ມ, ສະຖານທີ່ຫລີ້ນການພະນັນ, ສະຖານທີ່ຫລີ້ນບິລຽດ -ສະນຸກເກີ, ສະຖານທີ່ຫລີ້ນໂບວລິ້ງ, ຮ້ານຂາຍອາຫານສົດ, ສະຖານທີ່ບໍຣິການອາຫານທຸກສະຖານທີ່
- ສະຖານທີ່ຫລີ້ນກິລາໃນຮົ່ມ, ໂຮງພາລະສຶກສາ ແລະ ຫ້ອງປະຊຸມ
- ສະຖານທີ່ປິ່ນປົວສຸຂະພາບ, ໂຮງພະຍາບານ, ຄລີນິກ, ຫ້ອງເຮັດການຂອງທ່ານຫມໍ ແລະ ສະຖານທີ່ລ້ຽງເດັກ
- ບໍ່ໃຫ້ຫລຸດ 75% ຂອງເນື້ອທີ່ຫ້ອງເຊົ່າໃນໂຮງແຮມ ແລະ ໂມເທລ
- ຫ້ອງລໍຖ້າ ແລະ ຫ້ອງປະຊຸມຂອງບັນດາລຸກຂຸນ, ຫ້ອງສານ ແລະ ຫ້ອງປະຊຸມສາທາຣະນະ
- ພາຫະນະໂດຍສານຂອງຣັດທຸກສນິດ ແລະຣູບແບບ

## ບໍຣິເວນທາງເຂົ້າ

- ບໍຣິເວນທາງເຂົ້າຂອງທຸກຕົວອາຄານທີ່ຄວບຄຸມໂດຍກົດຫມາຍນີ້ ຈະຕ້ອງໃຫ້ປອດຈາກກິ່ນຄວັນຂອງຢາສູບ
- "ບໍຣິເວນທາງເຂົ້າ" ຫມາຍເຖິງບໍຣິເວນຂ້າງນອກຕໍ່ຫນ້າທາງເຂົ້າຂອງທຸກຕົວອາຄານ. ບໍຣິເວນທາງເຂົ້ານີ້ກວມລວມທັງເຂດກໍ່ານົດພິເສດທີ່ຢູ່ຂ້າງນອກຕໍ່ຫນ້າທາງເຂົ້າຊັບສິນທີ່ເປັນສາທາຣະນະ ແລະ ເອກກະຊົນອີກດ້ວຍ. ອໍານາດການປົກຄອງທ້ອງຖິ່ນ ຈະເປັນຜູ້ກໍານົດເຂດກໍານົດພິເສດເອົາເອງ ຫລື ຖ້າອໍານາດການປົກຄອງທ້ອງຖິ່ນບໍ່ປະຕິບັດ ເຂດກໍານົດພິເສດກໍ່ຄວນຈະເປັນບໍຣິເວນ 15 ຟິດ ຈາກທາງເຂົ້າຂອງຕົວອາຄານ.
- ອໍານາດການປົກຄອງທ້ອງຖິ່ນ ອາດກໍານົດບໍຣິເວນເຂດກໍານົດພິເສດນ້ອຍກວ່າ 15 ຟິດ ກໍ່ເປັນໄດ້

## ການຍົກເວັ້ນ

- ບ້ານເຮືອນ, ທີ່ພັກ, ພາຫະນະທີ່ເປັນຂອງສ່ວນຕົວ ເວັ້ນເສັຽແຕ່ໃຊ້ເປັນບ່ອນແລະພາຫະນະ ຮັບຝາກ ແລະລ້ຽງເດັກ
- ຣົດ ລີມູຊີນ ທີ່ຮັບຈ້າງອັນສີ່ງສ່ວນຕົວ
- 25% ຂອງຫ້ອງເຊົ່າໃນໂຮງແຮມແລະໂມເທລ
- ຮ້ານຂາຍຢາສູບຍ່ອຍ
- ສະຖານທີ່ທີ່ຖືກຕ້ອງກັບນິຍາມຂອງຮ້ານສູບຢາ "cigar-tobacco bar" ຊຶ່ງກຳນົດໄວ້ໃນມື້ວັນທີ່ 31 ທັນວາ, 2005.
- ບໍຣິເວນນອກເຂດກຳນົດພິເສດໃກ້ທາງເຂົ້າຂອງທຸກຕົວອາຄານທີ່ທຳທຸຣະກິດ
- ເຂດພື້ນທີ່ຍ່ອຍ ໃນສະຖານທີ່ຫລີ້ການພະນັນ
- ຫ້ອງສູບຢາທີ່ປິດສນິດ ແຕ່ລະບາຍດ້ວຍພັດລົມດູດກິ່ນອອກຢ່າງ ໃນສນາມບິນ Denver International
- ນາຍຈ້າງທີ່ມີພະນັກງານສາມຄົນ ຫລື ນ້ອຍກວ່ານັ້ນ ຊຶ່ງບໍ່ສາມາດໃຊ້ສະຖານທີ່ສາທາຣະນະໄດ້
- ອາຄານສ່ວນຕົວໃນ farm ຫລື ranch ທີ່ມີຣາຍໄດ້ທັງຫມົດຕ່ຳກວ່າ 500.000 ດອນລາ

## ການລົງໂທດ

ການລະເມີດຕໍ່ກົດຫມາຍນີ້ ເປັນການກະທຳຄວາມຜິດສະຖານເບົາຣະດັບ 2 (Class 2 Petty Offense)

- ມັນເປັນການບະເມີດກົດຫມາຍທີ່ບຸກຄົນຄົນນຶ່ງ ຊຶ່ງເປັນເຈົ້າຂອງ, ດູແລ, ນຳໃຊ້ ຫລືເວົ້າອີກຢ່າງນຶ່ງວະ ຄວບຄຸມການໃຊ້ສອຍສະຖານທີ່ ທີ່ຢູ່ພາຍໃຕ້ກົດຫມາຍ ຈະລະເມີດຕໍ່ຂໍ້ກຳນົດຂອງກົດຫມາຍນີ້
- ມັນເປັນການບະເມີດກົດຫມາຍທີ່ບຸກຄົນຄົນນຶ່ງ ຈະຕ້ອງສູບຢາ ໃນເຂດຫ້າມສູບຢາຕາມກົດຫມາຍ
- ກະທຳຄວາມຜິກ ຄັ້ງທີ່ 1 ພາຍໃນນຶ່ງປີ ຈະຖືກປັບໄຫມ -200 ດອນລາ
- ກະທຳຄວາມຜິກ ຄັ້ງທີ່ 2 ພາຍໃນນຶ່ງປີ ຈະຖືກປັບໄຫມ -300 ດອນລາ
- ກະທຳຄວາມຜິກ ຄັ້ງທ 3 ພາຍໃນນຶ່ງປີ ຈະຖືກປັບໄຫມ -500 ດອນລາ

ແຕ່ລະມື້ທີ່ມີການລະເມີດແບບຕໍ່ເນື່ອງ ເຫັນເປັນກໍຣະນີຄວາມຜິດທີ່ແຍກອອກຕ່າງຫາກ

## ການບັງຄັບໃຊ້

- ກົດຫມາຍນີ້ຈະຖືກບັງຄັບໃຊ້ໂດຍອຳນາດການປົກຄອງທ້ອງຖິ່ນ

ຖ້າທ່ານຕ້ອງການຢາກໄດ້ສຳເນົາກົດຫມາຍນີ້ ກະຣຸນາເຂົ້າໄປແວບໄຊດ: *www.SmokeFreeColorado.org*